ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ເລກທີ 001 ປປທ

ລົງວັນທີ 31.01.2012

# ລັດຖະບັນຍັດ
# ຂອງປະທານປະເທດ

## ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

**ວ່າດ້ວຍ ການແບ່ງປັນລາຍຮັບຈາກການຂາຍໄມ້ ທີ່ຂຸດຄົ້ນໃນເຂດປ່າຜະລິດ.**

---

- ອີງຕາມລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ໝວດທີ VI ມາດຕາ 67 ຂໍ້ 2 ສະບັບປັບປຸງ;
- ອີງຕາມ ກົດໝາຍວ່າດ້ວຍປ່າໄມ້ ສະບັບເລກທີ 06/ສພຊ, ລົງວັນທີ 24 ທັນວາ 2007;
- ອີງຕາມໜັງສືສະເໜີ ຂອງຄະນະປະຈຳສະພາແຫ່ງຊາດ ສະບັບເລກທີ 029 /ຄປຈ, ລົງວັນທີ 16 ມັງກອນ 2012.

*ປະທານປະເທດ*

*ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະບັນຍັດ :*

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1. ຈຸດປະສົງ**

ລັດຖະບັນຍັດສະບັບນີ້ ກຳນົດຫລັກການ, ລະບຽບການ ກ່ຽວກັບການແບ່ງປັນ, ຄຸ້ມຄອງ ແລະ ນຳໃຊ້ ລາຍຮັບຈາກການຂາຍໄມ້ ທີ່ຂຸດຄົ້ນໃນເຂດປ່າຜະລິດ ເພື່ອເປັນແຫລ່ງງົບປະມານໃຫ້ແກ່ວຽກງານຄຸ້ມຄອງ, ປົກປັກຮັກສາ ແລະ ພັດທະນາປ່າໄມ້ ເປັນຕົ້ນ ປ່າຜະລິດ; ເປັນທຶນ ພັດທະນາບ້ານ ຫລື ກຸ່ມບ້ານ ທີ່ມີເຂດແດນຕິດກັບປ່າຜະລິດ, ແນໃສ່ຮັບປະກັນໃຫ້ມີແຫລ່ງງົບປະມານທີ່ໝັ້ນທ່ຽງ, ສະໜອງໃຫ້ແກ່ວຽກງານ ພັດທະນາປ່າໄມ້ ແລະ ປະກອບສ່ວນຊຸກຍູ້ສົ່ງເສີມການຜະລິດ, ແກ້ໄຂຄວາມທຸກຍາກຂອງປະຊາຊົນບັນດາເຜົ່າ, ຮັບປະກັນໃຫ້ປະຊາຊົນ ແລະ ພາກສ່ວນທີ່ກ່ຽວຂ້ອງ ເປັນເຈົ້າການເຂົ້າຮ່ວມໃນການຄຸ້ມຄອງ, ປົກປັກຮັກສາ, ພັດທະນາ ແລະ ນຳໃຊ້ປ່າຜະລິດແບບຍືນນານ.

**ມາດຕາ 2. ການເກັບລາຍຮັບຈາກການຂາຍໄມ້ ທີ່ຂຸດຄົ້ນໃນເຂດປ່າຜະລິດ**

ລາຍຮັບຈາກການຂາຍໄມ້ ທີ່ຂຸດຄົ້ນໃນເຂດປ່າຜະລິດ ແມ່ນມູນຄ່າຂອງການຂາຍໄມ້ທັງໝົດ ໂດຍຜ່ານການປະມູນ ຫລື ການສົມທຽບລາຄາ.

**ມາດຕາ 3. ຂອບເຂດການນຳໃຊ້**

ລັດຖະບັນຍັດສະບັບນີ້ ມີຜົນບັງຄັບໃຊ້ສຳລັບບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງ, ທີ່ວໜ່ວຍທຸລະກິດ ແລະ ຜູ້ປະກອບການ ທີ່ດຳເນີນກິດຈະການກ່ຽວກັບການຄຸ້ມຄອງ, ປົກປັກຮັກສາ, ພັດທະນາ ແລະນຳໃຊ້ປ່າຜະລິດ ໃນ ສປປ ລາວ ແລະບໍ່ມີຜົນບັງຄັບໃຊ້ສຳລັບປ່າປ້ອງກັນ ແລະ ປ່າສະຫງວນ.

## ໝວດທີ 2
## ການແບ່ງປັນລາຍຮັບ
## ຈາກການຂາຍໄມ້ ທີ່ຂຸດຄົ້ນໃນເຂດປ່າຜະລິດ

**ມາດຕາ 4. ການແບ່ງປັນລາຍຮັບຈາກການຂາຍໄມ້ ທີ່ຂຸດຄົ້ນໃນເຂດປ່າຜະລິດ**

ລາຍຮັບທີ່ໄດ້ຈາກການຂາຍໄມ້ ທີ່ຂຸດຄົ້ນໃນເຂດປ່າຜະລິດ ແມ່ນໃຫ້ແບ່ງເປັນສອງສ່ວນດັ່ງນີ້:

1. **ສ່ວນທີໜຶ່ງ: ເຈັດສິບສ່ວນຮ້ອຍ (70%) ຂອງລາຍຮັບທັງໝົດ** ເປັນລາຍຮັບງົບມານແຫ່ງລັດ;
2. **ສ່ວນທີສອງ: ສາມສິບສ່ວນຮ້ອຍ (30%) ຂອງລາຍຮັບທັງໝົດ** ເປັນງົບປະມານໃຫ້ແກ່ວຽກງານຄຸ້ມຄອງ, ປົກປັກຮັກສາ ແລະ ພັດທະນາປ່າໄມ້ ເປັນຕົ້ນ ປ່າຜະລິດ; ເປັນກອງທຶນພັດທະນາບ້ານ ຫລື ກຸ່ມບ້ານ ທີ່ມີເຂດແດນຕິດກັບປ່າຜະລິດ.

**ມາດຕາ 5. ການແບ່ງປັນ ສ່ວນທີສອງຂອງລາຍຮັບທັງໝົດ**

ສ່ວນແບ່ງທີສອງຂອງລາຍຮັບທັງໝົດໃຫ້ແບ່ງອອກເປັນ ສີ່ (4) ພູດ ເພື່ອນຳໃຊ້ເຂົ້າໃນຈຸດປະສົງ ຕ່າງໆດັ່ງນີ້ :

1. ພູດທີໜຶ່ງ ຊາວສ່ວນຮ້ອຍ (20%) ເປັນກອງທຶນພັດທະນາປ່າໄມ້ ແລະ ຊັບພະຍາກອນປ່າໄມ້;
2. ພູດທີສອງ ຊາວສ່ວນຮ້ອຍ (20%) ເປັນທຶນພັດທະນາປ່າຜະລິດໃນທົ່ວປະເທດ;
3. ພູດທີສາມ ຊາວສ່ວນຮ້ອຍ (20%) ເປັນທຶນພັດທະນາປ່າຜະລິດບ່ອນທີ່ໄດ້ດຳເນີນ ການຂຸດຄົ້ນໄມ້;
4. ພູດທີສີ່ ສີ່ສິບສ່ວນຮ້ອຍ (40%) ເປັນທຶນພັດທະນາບ້ານ ຫລື ກຸ່ມບ້ານ ທີ່ເປັນຄູ່ສັນຍາຮ່ວມການຄຸ້ມຄອງປ່າຜະລິດ.

## ໝວດທີ 3
## ການຄຸ້ມຄອງ, ການນຳໃຊ້ ແລະກວດກາ
## ລາຍຮັບຈາກການຂາຍໄມ້ ທີ່ຂຸດຄົ້ນໃນເຂດປ່າຜະລິດ

**ມາດຕາ 6. ການຄຸ້ມຄອງລາຍຮັບຈາກການຂາຍໄມ້ ທີ່ຂຸດຄົ້ນໃນເຂດປ່າຜະລິດ**

ລາຍຮັບຈາກການຂາຍໄມ້ ທີ່ຂຸດຄົ້ນໃນເຂດປ່າຜະລິດຕ້ອງ ໄດ້ມອບເຂົ້າງົບປະມານແຫ່ງລັດ ຕາມກົດໝາຍວ່າດ້ວຍງົບປະມານ ເພື່ອລວມສູນດ້ານລາຍຮັບຢູ່ຄັງເງິນແຫ່ງຊາດ.

ຂະແໜງການຄຸ້ມຄອງຊັບສິນຂອງລັດ ເປັນຜູ້ອອກໃບສັ່ງມອບ ລາຍຮັບຈາກການຂາຍໄມ້ທີ່ຂຸດຄົ້ນໃນເຂດປ່າຜະລິດຈຳນວນ ເຈັດສິບສ່ວນຮ້ອຍ (70%) ເຂົ້າໃນງົບປະມານແຫ່ງລັດ ແລະ ສາມສິບສ່ວນຮ້ອຍ (30%) ເຂົ້າກອງທຶນພັດທະນາປ່າໄມ້ ແລະ ຊັບພະຍາກອນປ່າໄມ້ ຢູ່ໃນລະບົບຄັງເງິນແຫ່ງຊາດ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 4 ແລະ ມາດຕາ 5 ຂອງລັດຖະບັນຍັດສະບັບນີ້.

ຂະແໜງການ ກະສິກຳ ແລະ ປ່າໄມ້ ເປັນໃຈກາງ ປະສານສົມທົບ ກັບຂະແໜງການ ການເງິນ; ອຸດສະຫະກຳ ແລະ ການຄ້າ; ຂະແໜງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ; ແລະພາກສ່ວນທີ່ກ່ຽວຂ້ອງອື່ນໆ ທັງຢູ່ສູນກາງ ແລະ ທ້ອງຖິ່ນ ເພື່ອຄຸ້ມຄອງລາຍຮັບດັ່ງກ່າວ ຕາມທີ່ໄດ້ກຳນົດໄວ້ໃນລັດຖະບັນຍັດສະບັບນີ້.

**ມາດຕາ 7. ການຄຸ້ມຄອງສ່ວນແບ່ງທີສອງ.**

ການຄຸ້ມຄອງສ່ວນແບ່ງທີສອງຂອງລາຍຮັບທັງໝົດ ໃຫ້ປະຕິບັດດັ່ງນີ້:

1. ສະພາບໍລິຫານກອງທຶນພັດທະນາປ່າໄມ້ ແລະ ຊັບພະຍາກອນປ່າໄມ້ ເປັນຜູ້ຄຸ້ມຄອງສ່ວນແບ່ງພູດທີໜຶ່ງ, ພູດທີສອງ ແລະ ພູດທີສາມ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 6 ຂອງລັດຖະບັນຍັດສະບັບນີ້ ໂດຍໃຫ້ມີບັນຊີຄຸ້ມຄອງສະເພາະ ຂອງ ແຕ່ລະພູດ;
2. ກອງທຶນພັດທະນາປ່າໄມ້ ແລະ ຊັບພະຍາກອນປ່າໄມ້ ຕ້ອງໂອນຈຳນວນເງິນພູດທີສີ່ ເຂົ້າບັນຊີຂອງບ້ານ ແລະ ກຸ່ມບ້ານ ທີ່ເປັນຄູ່ສັນຍາຮ່ວມການຄຸ້ມຄອງປ່າຜະລິດ ຕາມການສະເໜີຂອງພະແນກກະສິກຳ ແລະປ່າໄມ້ ປະຈຳແຂວງ, ນະຄອນຫຼວງ;
3. ອົງການປົກຄອງເມືອງ ແລະ ຫ້ອງການກະສິກຳ ແລະ ປ່າໄມ້ເມືອງ ມີໜ້າທີ່ເຂົ້າຮ່ວມຊີ້ນຳການສ້າງແຜນພັດທະນາບ້ານ ແລະ ກຸ່ມບ້ານ ໃນການຄຸ້ມຄອງ-ນຳໃຊ້ທຶນຢ່າງມີປະສິດທິຜົນ.

**ມາດຕາ 8. ການນຳໃຊ້ສ່ວນແບ່ງທີໜຶ່ງ**

ໃຫ້ນຳໃຊ້ສ່ວນແບ່ງທີໜຶ່ງ ຂອງລາຍຮັບທັງໝົດເປັນຄ່າໃຊ້ຈ່າຍໃນການຂຸດຄົ້ນໄມ້, ຄ່າອອກໃບຢັ້ງຢືນການຈັດສັນປ່າຜະລິດແບບຍືນຍົງ ແລະ ຄ່າໃຊ້ຈ່າຍເຂົ້າໃນແຜນພັດທະນາເສດຖະກິດສັງຄົມ ຂອງລັດຖະບານ.

**ມາດຕາ 9. ການນຳໃຊ້ສ່ວນແບ່ງທີສອງ**

ສ່ວນແບ່ງທີສອງ ຂອງລາຍຮັບທັງໝົດໃຫ້ນຳໃຊ້ ດັ່ງນີ້:

1. ພູດທີໜຶ່ງ ຊາວສ່ວນຮ້ອຍ (20%) ທີ່ເປັນກອງທຶນພັດທະນາປ່າໄມ້ ແລະ ຊັບພະຍາກອນປ່າໄມ້ ໃຫ້ໃຊ້ຈ່າຍຕາມແຜນການພັດທະນາປ່າໄມ້ ລວມຂອງປະເທດ;
2. ພູດທີສອງ ຊາວສ່ວນຮ້ອຍ (20%) ທີ່ເປັນກອງທຶນພັດທະນາປ່າຜະລິດ ໃນທົ່ວປະເທດໃຫ້ໃຊ້ຈ່າຍເຂົ້າໃນ ກິດຈະກຳບູລະນະ, ຄຸ້ມຄອງ ແລະ ປົກປັກຮັກສາທີ່ກຳນົດໄວ້ໃນແຜນຈັດສັນຄຸ້ມຄອງປ່າຜະລິດໃນທົ່ວປະເທດ;
3. ພູດທີສາມ ຊາວສ່ວນຮ້ອຍ (20%) ທີ່ເປັນທຶນພັດທະນາປ່າຜະລິດເຂດທີ່ມີການຂຸດຄົ້ນໄມ້ໃຫ້ໃຊ້ຈ່າຍເຂົ້າໃນການຈັດຕັ້ງປະຕິບັດແຜນກິດຈະກຳ ຈັດສັນຄຸ້ມຄອງປ່າຜະລິດຂອງເຂດນັ້ນ;

4. ພູດທີສີ່ ສີ່ສິບສ່ວນຮ້ອຍ (40%) ທີ່ເປັນທຶນພັດທະນາບ້ານ ແລະ ກຸ່ມບ້ານ ທີ່ມີເຂດແດນຕິດກັບປ່າຜະລິດ ທີ່ມີການຂຸດຄົ້ນໃຫ້ນຳໃຊ້ເຂົ້າໃນການຈັດຕັ້ງປະຕິບັດແຜນພັດທະນາບ້ານ ແລະ ກຸ່ມບ້ານ ໂດຍມີການຢັ້ງຢືນຈາກຫ້ອງການກະສິກຳ ແລະ ປ່າໄມ້ເມືອງ ແລະ ມີການຮັບຮອງຈາກອົງການປົກຄອງເມືອງ.

ມອບໃຫ້ລັດຖະບານຊີ້ນຳຂະແໜງການກະສິກຳ ແລະ ປ່າໄມ້, ການເງິນ, ອຸດສະຫະກຳ ແລະ ການຄ້າ ແລະ ຂະແໜງການອື່ນທີ່ກ່ຽວຂ້ອງ ຄົ້ນຄ້ວາປັບປຸງນິຕິກຳ ກ່ຽວກັບ ການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກອງທຶນພັດທະນາປ່າໄມ້ ແລະ ຊັບພະຍາກອນປ່າໄມ້ ແລະ ອອກລະບຽບການຄຸ້ມຄອງ ແລະ ການນຳໃຊ້ ສະເພາະຂອງແຕ່ລະພູດ.

**ມາດຕາ 10.** ການກວດກາການນຳໃຊ້ລາຍຮັບຈາກການຂາຍໄມ້ທີ່ຂຸດຄົ້ນໃນເຂດປ່າຜະລິດ.

ມອບໃຫ້ລັດຖະບານຊີ້ນຳ ຂະແໜງການທີ່ກ່ຽວຂ້ອງ ຕິດຕາມກວດກາການຄຸ້ມຄອງ ແລະ ການນຳໃຊ້ລາຍຮັບຈາກການຂາຍໄມ້ທີ່ຂຸດຄົ້ນໃນເຂດປ່າຜະລິດຢ່າງເປັນປົກກະຕິ ທັງຮັບປະກັນປະສິດທິຜົນ, ມີຄວາມໂປ່ງໃສ ແລະ ສາມາດກວດສອບໄດ້ຕາມລະບຽບກົດໝາຍ.

ອົງການກວດກາລັດ, ອົງການກວດສອບບັນຊີແຫ່ງລັດມີສິດ ແລະ ໜ້າທີ່ກວດກາການຈັດຕັ້ງປະຕິບັດ ຕາມພາລະບົດບາດ, ສິດ ແລະ ໜ້າທີ່ຂອງຕົນ ເພື່ອເຮັດໃຫ້ການຈັດຕັ້ງປະຕິບັດມີປະສິດທິຜົນ ແລະ ຍຸຕິທຳ.

ອົງການປົກຄອງທ້ອງຖິ່ນຂັ້ນຕ່າງໆຕ້ອງມີສ່ວນຮ່ວມໃນການກວດກາຕິດຕາມ ຕາມພາລະບົດບາດຂອງຕົນ.

## ໝວດທີ 4
## ບົດບັນຍັດສຸດທ້າຍ

**ມາດຕາ 11. ການຈັດຕັ້ງປະຕິບັດ**

ລັດຖະບານ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ເປັນຜູ້ຈັດຕັ້ງປະຕິບັດລັດຖະບັນຍັດສະບັບນີ້.

**ມາດຕາ 12. ຜົນສັກສິດ**

ລັດຖະບັນຍັດສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ຂໍ້ກຳນົດ, ບົດບັນຍັດໃດ ທີ່ຂັດກັບລັດຖະບັນຍັດສະບັບນີ້ ລ້ວນແຕ່ຖືກຍົກເລີກ.

**ປະທານປະເທດ ແຫ່ງ ສປປ ລາວ.**

ຈູມມາລີ ໄຊຍະສອນ